# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳ 09 ເດືອນປີ 2018

## 1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 70%, ນັກລົງທຶນພາຍໃນ (ລວມທັງພະນັກ ງານທຄຕລ) ແລະ ນັກລົງທຶນຕ່າງປະເທດ 20% ແລະ ຄູ່ຮ່ວມຍຸດທະສາດ 10%.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ທຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄໍ້າປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

**ທຶນຈົດທະບຽນ**

ທຶນຈົດທະບຽນ ນະວັນທີ 30 ກັນຍາ 2018 ແມ່ນ 1.038.617 ລ້ານກີບ (ນະວັນທີ 31 ທັນວາ 2017 : 1.038.617 ລ້ານກີບ)

**ທີ່ຕັ້ງ ແລະ ເຄືອຂ່າຍ**

ສໍານັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄໍາ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ກັນຍາ 2018 ທະນາຄານມີ (1) ສໍານັກງານໃຫຍ່, (1) ບໍລິສັດໃນເຄືອ, (4) ບໍລິສັດຮ່ວມທຶນ, (20) ສາຂາຫຼັກ, (92) ໜ່ວຍບໍລິການ ແລະ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

## 2. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: “ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ ”.

## 3. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ, ພາລະກິດທີ່ສໍາຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທໍາຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດຄ່ອງຕາມຫຼັກການ Basel II, ຍົກສູງປະສິດທິພາບການດໍາເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນໍາໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

- **ເປົ້າໝາຍການດໍາເນີນງານໃນປີ 2018**

ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວ ທຄຕລ ໄດ້ຄົ້ນຄວ້າດັດແກ້ເພີ່ມເຕີມບາງດ້ານ ເພື່ອຮອງຮັບການປັບປຸງບໍລິການພັດທະນາລະບົບການຄຸ້ມຄອງບໍລິຫານໃນປີ 2018 ໃຫ້ສອດຄ່ອງຍິ່ງຂຶ້ນ, ຈຶ່ງໄດ້ມີການເພີ່ມໂຄງການຍ່ອຍເຂົ້າມາຕື່ມບາງດ້ານ ໂດຍສະເພາະໂຄງການທີ່ເປັນວຽກງານບູລິມະສິດພື້ນຖານຂອງໂຄງການໃຫຍ່ຂອງ Basel II ແລະ ບັນດາແຜນງານກໍ່ໄດ້ເພີ່ມຂຶ້ນເຊັ່ນກັນຄື: ປະກອບມີ 6 ແຜນງານຫຼັກ (ຮັກສາເດີມ); 32 ໂຄງການໃຫຍ່ ແລະ 253 ແຜນວຽກ (ເພີ່ມຂຶ້ນ 62 ແຜນວຽກ). ການເພີ່ມຂຶ້ນຂອງແຜນງານແມ່ນນອນໃນແຜນງານບໍລິການທີ່ອາດເປັນພື້ນຖານຂອງ Basel II ຊຶ່ງບັນດາໜ້າວຽກດັ່ງກ່າວໄດ້ກະຈາຍຢູ່ໃນບັນດາຄະນະກໍາມະການ, ພະແນກ, ສູນ, ສາຂາ ແລະ ໜ່ວຍບໍລິການຄື:

- **ບັນດາໂຄງການຂອງແຕ່ລະແຜນງານມີຄື :**

- ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ CG: 3 ໂຄງການ (ຮັກສາເດີມ ຍ້ອນບໍ່ທັນໄດ້ຈັດຕັ້ງປະຕິບັດ ລໍຖ້າພື້ນຖານ Basel II ດໍາເນີນໄປກ່ອນ).
- ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກການ Basel II ລວມມີ 4 ໂຄງການ (ເພີ້ມຂຶ້ນ 2 ໂຄງການ).
- ສ້າງລະບົບຂໍ້ມູນເພື່ອການບໍລິຫານ : 6 ໂຄງການ (ເພີ້ມຂຶ້ນ 1 ໂຄງການ).
- ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ມີ 5 ໂຄງການ (ຫລຸດລົງ 2 ໂຄງການ).
- ການບໍລິຫານ ແລະ ພັດທະນາ ບຸກຄະລາກອນ ລວມມີ 4 ໂຄງການ (ຫລຸດລົງ 1 ໂຄງການ).

- ພັດທະນາການບໍລິຫານການເງິນ, ການບໍລິການທີ່ທັນສະໄໝ ແລະ ປະສິດທິພາບການດໍາເນີນທຸລະກິດໃຫ້ສູງຂຶ້ນ : ມີ 10 ໂຄງການ.

ນອກຈາກໂຄງການຫຼັກນີ້ແລ້ວ, ຍັງຈະມີໂຄງການສະໜັບສະໜູນຕື່ມອີກຫລາຍໂຄງການຍ່ອຍເພີ້ມຕື່ມເຊັ່ນ: ໂຄງການສືບຕໍ່ LOS, ບັນດາໂຄງການຍ່ອຍຂອງ Basel II, ໂຄງການຂອງການພັດທະນາຜະລິດຕະພັນ, ໂຄງການປຸກສ້າງ ແລະ ອື່ນໆ.

## 4. ກົງຈັກການຈັດຕັ້ງ.

**4.1 ໂຄງຮ່າງການຈັດຕັ້ງ ທຄຕລ:** ປະກອບດ້ວຍສະພາບໍລິຫານ ຈໍານວນ 7 ທ່ານ, ຄະນະອໍານວຍການ ຈໍານວນ 7 ທ່ານ, 11 ພະແນກ, 3 ສູນ, 20 ສາຂາ, 92 ໜ່ວຍບໍລິການ ແລະ 16 ຫ້ອງແລກປ່ຽນເງິນຕາທົ່ວປະເທດ.

**4.2 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ປະກອບດ້ວຍ 7 ທ່ານ:

| | |
|---|---|
| - ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ | ເປັນປະທານ |
| - ທ່ານ ຄໍາສຸກ ສູນດາລາ | ເປັນຮອງປະທານ |
| - ທ່ານ ພູຊົງ ຈັນທະຈັກ | ເປັນສະມາຊິກ |
| - ທ່ານ ມາກ ໂຣເບີດ | ເປັນສະມາຊິກ |
| - ທ່ານ ພຸດທະຂັນ ຂັນຕິ | ເປັນສະມາຊິກ |
| - ທ່ານ ຮອງສາດສະດາຈານ ປອ ພູເພັດ ກ້ຽວພິລາວົງ | ເປັນສະມາຊິກ |
| - ທ່ານ ວຽງສຸກ ຈຸນທະວົງ | ເປັນສະມາຊິກ |

# ໂຄງຮ່າງຄະນະສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ ປະທານສະພາບໍລິຫານ



ທ່ານ ຄໍາສຸກ ສູນດາລາ
ຮອງປະທານສະພາບໍລິຫານ



ທ່ານ ພູຂົງ ຈັນທະຈັກ
ສະມາຊິກ



ທ່ານ ມາກ ໂຣເບີດ
ສະມາຊິກ



ທ່ານ ພຸດທະຂັນ ຂັນຕິ
ສະມາຊິກ



ທ່ານ ຣສ ປອ ພູເພັດ ກ້ຽວພິລາວົງ



ທ່ານ ວຽງສຸກ ຈຸນທະວົງ

**4.3 ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ປະກອບມີ 7 ທ່ານ

- ທ່ານ ພູຂົງ ຈັນທະຈັກ — ຜູ້ອຳນວຍການໃຫຍ່
- ທ່ານ ພັນຊະນະ ຄູນນຸວົງ — ຮອງຜູ້ອຳນວຍການ
- ທ່ານ ລາໃຈ ຄັນພຣະວົງສ໌ — ຮອງຜູ້ອຳນວຍການ
- ທ່ານ ນັນທະລາດ ແກ້ວປະເສີດ — ຮອງຜູ້ອຳນວຍການ
- ທ່ານ ຄຳຊ່ຽນ ມິ່ງບຸບຜາ — ຮອງຜູ້ອຳນວຍການ
- ທ່ານ ສຸພັກ ຖິ່ນໄຊພອນ — ຮອງຜູ້ອຳນວຍການ
- ທ່ານ ບົວວັນ ສີມະລີວົງ — ຮອງຜູ້ອຳນວຍການ

## ໂຄງຮ່າງຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



## 5. ການຈັດຕັ້ງປະຕິບັດພາລະກິດ ປະຈຳ 09 ເດືອນ ປີ 2018.

ໃນ 09 ເດືອນ ປີ 2018 ທີ່ຜ່ານມານີ້ ທຄຕລ ສາມາດປະຕິບັດວຽກງານໄດ້ຫຼາຍດ້ານ ເຊັ່ນ: ໄດ້ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ 3 ຄັ້ງ, ຈັດກອງປະຊຸມທົບທວນປະຈຳປີ 2017 ແລະ ຮັບຮອງແຜນການ 2018; ຈັດກອງປະຊຸມທົບທວນປະຈຳໄຕມາດ ຈຳນວນ 02 ຄັ້ງ; ຈັດກອງປະຊຸມສາມັນຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2017. ພ້ອມກັນນັ້ນ, ທຄຕລ ໄດ້ເປີດເຜີຍຜົນການດຳເນີນທຸລະກິດປະຈຳປີ 2017 ແລະ ປະຈຳໄຕມາດ 01/2018 ຜ່ານລະບົບເປີດເຜີຍຂອງຕະຫຼາດຫຼັກຊັບລາວ ພ້ອມທັງໄດ້ມີການໂຮມພະແນກຄຸ້ມຄອງສາຂາ ເຂົ້າກັບ ພະແນກກວດກາພາຍໃນ ແລະ ສ້າງຕັ້ງພະແນກການຕະຫຼາດ ຂຶ້ນໃໝ່ຊຶ່ງແຍກອອກຈາກ ພະແນກຄົ້ນຄວ້າ ແລະ ພັດທະນາ.

ລາງວັນທີ່ ທຄຕລ ໄດ້ຮັບມີຄື: ລາງວັນຈາກ Asian Banking & Finance Magazine 3 ລາງວັນຄື: ລາງວັນດີເດັ່ນດ້ານແນວຄິດລິເລີ່ມເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງແຫ່ງປີ; ລາງວັນດີເດັ່ນດ້ານແນວຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບມືຖືແຫ່ງປີ ແລະ ໄດ້ຮັບລາງວັນທະນາຄານດີເດັ່ນດ້ານການດຳເນີນງານວຽກງານການໂອນເງິນລະຫວ່າງປະເທດປະຈຳປີ 2017-2018 ແລະ ລາງວັນຊະນະເລີດອັນດັບ 1 ໃນງານແຂ່ງຂັນລະດັບຊາດ LAO ICT Award 2018 ແລະ ພ້ອມທັງໄດ້ຈັບລາງວັນ " Top Spender Usage Campaign " ໃຫ້ລູກຄ້າຜູ້ໂຊກດີໄປຮັບຊົມເຕະບານທີ່: ປະເທດສິງກະໂປ. ນອກນັ້ນ, ທຄຕລ ໄດ້ມີການຂະຫຍາຍຕາໜ່າງບໍລິການ 7 ຈຸດເພື່ອອຳນວຍຄວາມສະດວກໃຫ້ສັງຄົມມາໃຊ້ບໍລິການຫຼາຍຂຶ້ນເຊັ່ນ: ເປີດບໍລິການສາຂາໄຊເສດຖາ, ໜ່ວຍບໍລິການສະພານທອງ, ໜ່ວຍບໍລິການໜອງໄຮ, ໜ່ວຍບໍລິການ CSC (ສາຂາຈຳປາສັກ), ໜ່ວຍບໍລິການໜອງດ້ວງ, ໜ່ວຍບໍລິການສູນການຄ້າວຽງຈັນ ແລະ ໜ່ວຍລິການເຊບັ້ງໄຟ (ສາຂາຄຳມ່ວນ).

ໄດ້ພັດທະນາສ້າງຜະລິດຕະພັນໃໝ່ໆອອກມາຮັບໃຊ້ສັງຄົມເຊັ່ນວ່າ: ເປີດຕົວຜະລິດຕະພັນ BCOME Phase II; Onepay ການຊຳລະສິນຄ້າຜ່ານ QR Code; OneHeart ໂຄງການຊ່ວຍເຫຼືອສັງຄົມ, ຜະລິດຕະພັນເງິນຝາກມີກຳນົດ 9, 15, 18, 21, 30, 42 ເດືອນ ແລະ 54 ເດືອນ; ພັດທະນາລະບົບການຊຳລະສະສາງລະຫວ່າງປະເທດດ້ວຍ QR Code ລະຫວ່າງ ທຄຕລ ແລະ ທະນາຄານທະນາຊາດໄທ. ນອກນັ້ນ, ໄດ້ລົງນາມການຮ່ວມມືລະຫວ່າງ ທຄຕລ ແລະ ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນສາຍໃຍສຳພັນວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ; ເຊັນສັນຍາຮ່ວມມືໂຄງ ການພັດທະນາລະບົບຈັດເກັບຄ່າທຳນຽມທາງຜູ້ໂດຍສານ ແລະ ພາຫະນະແບບອີເລັກໂທຣນິກ (Smart VAT Phase II) ຂອງດ່ານພາສີສາກົນຂົວມິດຕະພາບ I ລະຫວ່າງ ກົມພາສີ ແລະ ທຄຕລ ແລະ ເຊັນສັນຍາຮ່ວມມືໃນການຮັບຈ່າຍຄ່າທຳນຽມທາງ ລະຫວ່າງ ທຄຕລ ແລະ ທະນາຄານສົ່ງເສີມກະສິກຳ. ພ້ອມກັນນັ້ນ, ທຄຕລ ໄດ້ດຳເນີນໂຄງການອະນຸມັດສິນເຊື່ອແບບໃໝ່; ດຳເນີນແຜນການຂາຍຮຸ້ນ ທຄຕລ ທີ່ຖືໂດຍກະຊວງການເງິນຖືຄອງອອກຈຳນວນ 19%, ປະເມີນຊ່ອງວ່າງ (GAP) ຂອງໂຄງການ CG; ໂຄງການ Credit Rating ທຄຕລ ແລະ ສຳເລັດການທົບທວນຖານະການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2018 ຕາມລະບົບບັນຊີມາດຖານລາວ ແລະ ດຳເນີນການທົບທວນມາດຖານສາກົນ ປະຈຸບັນກຳລັງກະກຽມລໍຖ້າເປີດເຜີຍ.

## 6. ການເຄື່ອນໄຫວຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ຄະນະກຳມະການອື່ນໆ

- **ສະພາບໍລິຫານ**

ໃນ 09 ເດືອນ ປີ 2018 ສະພາບໍລິຫານ ທຄຕລ ໄດ້ເປີດກອງປະຊຸມ 3 ຄັ້ງ ເພື່ອຄົ້ນຄວ້າ ແລະ ຮັບຮອງບັນຫາສຳຄັນຕ່າງໆເຊັ່ນ:

- ຮັບຮອງຜົນການກວດສອບເອກະສານລາຍງານການເງິນ ປີ 2017 ມາດຖານສາກົນ (ສະເພາະກິດຈະການ ແລະ ສັງລວມກິດຈະການ), ພ້ອມກັບຮັບຮອງສັດສ່ວນການແບ່ງປັນກຳໄລຫຼັງອາກອນປະຈຳປີ 2017 ແລະ ເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຈຳນວນ 712 ກີບ/ຮຸ້ນ, ຮັບຮອງແຜນການປະຈຳປີ 2018 ຂອງ ທຄຕລ ແລະ ຮັບຮອງສະພາບໍລິຫານ ທຄຕລ ຊຸດໃໝ່.
- ຮັບຮອງເອົາ: ໂຄງສ້າງການບໍລິຫານຄວາມສ່ຽງ ທຄຕລ, ນະໂຍບາຍການບໍລິຫານຄວາມສ່ຽງດ້ານການດຳເນີນງານ, ນະໂຍບາຍການບໍລິຫານຄວາມສ່ຽງດ້ານຊື່ສຽງ ແລະ ນະໂຍບາຍ AML/CFT ສະບັບປັບປຸງ.
- ຮັບຮອງປັບປຸງໂຄງສ້າງພະແນກຄຸ້ມຄອງສິນເຊື່ອແບບໃໝ່ໂດຍນຳໃຊ້ລະບົບ Loan Origination System ແລະ ລະບົບຈັດອັນດັບສິນເຊື່ອ Credit Rating ເພື່ອໃຫ້ສອດຄ່ອງກັບການປະຕິບັດຫຼັກການ Basel II.
- ຕິດຕາມການຄົ້ນຄວ້າການຂາຍຮຸ້ນ ທຄຕລ ທີ່ລັດຖະບານຈະຂາຍອອກ 19%.

- **ຄະນະກຳມະການຄຸ້ມຄອງບໍລິຫານ**

- ຕິດຕາມຜົນການດຳເນີນທຸລະກິດແຕ່ລະເດືອນ ພ້ອມທັງໄດ້ໃຫ້ທິດຊີ້ນຳໃນການດຳເນີນງານຂອງ ທຄຕລ ແຕ່ລະໄລຍະເຊິ່ງວ່າຜົນການດຳເນີນງານຂອງ ທຄຕລ ໄຕມາດ 3/2018 ແມ່ນບັນລຸເກີນແຜນການທີ່ໄດ້ວາງໄວ້.
- ໄດ້ຕິດຕາມບັນຫາສະພາບຄ່ອງ ແລະ ການບໍລິຫານທຶນຂອງ ທຄຕລ ແຕ່ລະໄລຍະ.
- ເປີດກອງປະຊຸມຕິດຕາມການຄົ້ນຄວ້າການຂາຍຮຸ້ນ ທຄຕລ ທີ່ລັດຖະບານຖືຄອງ 19% ໄດ້ປຶກສາຫາລືກ່ຽວກັບວິທີການຂາຍ, ຂະບວນການຂາຍທີ່ສອດຄອງກັບລະບຽບກົດໝາຍ, ເນັ້ນຄວາມໂປ່ງໃສ ແລະ ຍຸດຕິທຳສຳລັບທຸກຝ່າຍ, ປະຈຸບັນ ທຄຕລ ຍັງລໍຖ້າທິດຊີ້ນຳຢ່າງເປັນທາງການຈາກກະຊວງການເງິນ.
- ວຽກງານສິນເຊື່ອໄດ້ເອົາໃຈໃສ່ຕິດຕາມລູກຄ້າລາຍໃຫຍ່, ຄຸ້ມຄອງ ແລະ ຫາວິທີແກ້ໄຂ NPL ໃຫ້ຢູ່ໃນລະດັບທີ່ເໝາະສົມ, ເອົາໃຈໃສ່ຂະຫຍາຍເງິນກູ້ໃຫ້ປະຕິບັດໄປຕາມແຜນການ ແລະ ໄດ້ປະກາດນຳໃຊ້ລະບຽບ SMEs ຂອງ ທຄຕລ.
- ຕິດຕາມຄວາມຄືບໜ້າໂຄງການ LOS&Credit Rating ໂດຍສຳເລັດການປະເມີນສະຖານະປະຈຸບັນຂອງ ທຄຕລ; ອອກແບບທິດທາງ, ເອກະສານ, ປະເມີນຊ່ອງຫວ່າງໃນຂະບວນການອະນຸມັດສິນເຊື່ອ ແລະ ກຳນົດບັນດາເງື່ອນໄຂ, ນ້ຳໜັກຂອງການຈັດອັນດັບສິນເຊື່ອ, ສຳເລັດການກຳນົດຈຳນວນໂມເດວການຈັດອັນດັບສິນເຊື່ອ.
- ຕິດຕາມການພັດທະນາສິນເຊື່ອຕາມໂຄງການBasel 2 ແລະ ພັດທະນາໂປແກຼມສິນເຊື່ອແບບໃໝ່ໃຫ້ເໝາະສົມ.
- ຕິດຕາມວຽກງານຈັດຕັ້ງ-ພະນັກງານເຊັ່ນ: ຄົ້ນຄວ້າສ້າງ KPI ສຳລັບພະນັກງານ, ປັບປຸງລະບຽບຍ້ອງຍໍ ແລະ ລະບຽບສະຫວັດດີການ; ຄົ້ນຄວ້າ, ປັບປຸງຄະນະກຳມະການຕ່າງໆຂອງ ທຄຕລ ຄືນໃໝ່ໃຫ້ເໝາະສົມ; ໄດ້ຄົ້ນຄວ້າ ແລະ ຮັບຮອງຂັ້ນພື້ນຖານໃນທິດທາງການຍົກຂະແໜງນິຕິກຳເປັນພະແນກໃນປີ 2019 ແລະ ຮັບຮອງຂັ້ນພື້ນຖານໃນການ

ສ້າງຕັ້ງພະແນກສິນເຊື່ອຕາມໂຄງສ້າງໃໝ່ ທີ່ຈະໄດ້ແຍກພະແນກສິນເຊື່ອອອກເປັນ 3 ພະແນກ ແລະ ສະເໜີຮັບຮອງໃນກອງປະຊຸມສະພາບໍລິຫານ.

- ສຳເລັດການສົ່ງເອກະສານເພື່ອເຊີນບໍລິສັດຜູ້ສະໜອງໂປຣແກຣມ (Vendor) ເພື່ອເຂົ້າຮ່ວມປະມູນຄາດວ່າຈະສຳເລັດການຄັດເລືອກຜູ້ສະໜອງ ແລະ ເຊັນສັນຍາພາຍໃນເດືອນ 11/2018.

➢ **ຄະນະກຳມະການບໍລິຫານຄວາມສ່ຽງ**

- ເປີດກອງປະຊຸມເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງຕາມຫຼັກການ Basel II ຂອງ ທຄຕລ ໃນໄຕມາດທີ 03 ຂອງປີ 2018 ມີຄື: ຄວາມສ່ຽງສຳຄັນ ແລະ ການຈັດຕັ້ງປະຕິບັດ; ສັງລວມຄວາມສ່ຽງຂອງອົງກອນ.
- ຈັດຕັ້ງປະຕິບັດຕາມຫຼັກການ Basel II ຂອງ ທຄຕລ ຄື: ສຳເລັດການຮ່າງບັນດາເອກະສານຕ່າງໆຫາບໍລິສັດຜູ້ສະໜອງໂປຣແກຣມ ແລະ ສົ່ງໃບເຊື້ອເຊີນປະມູນຫາ ບໍລິສັດສະໜອງລະບົບໄອທີ (Vendors); ສຳເລັດການປະເມີນຊ່ອງຫວ່າງດ້ານນະໂຍບາຍ ແລະ ລະບຽບການຈັດຕັ້ງປະຕິບັດວຽກງານ ALM ແລະ FTP ເບື້ອງຕົ້ນ ແລະ ສຳເລັດການປະເມີນບົດ Proposal ຂອງ ບໍລິສັດທີ່ປຶກສາ ຄື: ບໍລິສັດ KPMG ແລະ EY.
- ໄດ້ຄຸ້ມຄອງປະເມີນຂອບເຂດຄວາມສ່ຽງດ້ານສິນເຊື່ອໃນແຕ່ລະແໜງເສດຖະກິດ, ຄວາມສ່ຽງດ້ານສະພາບຄ່ອງທຽບໃສ່ບັນດາລະບຽບການທີ່ກຳນົດ, ຄວາມສ່ຽງດ້ານການດຳເນີນງານປະຈຳເດືອນ ແລະ ສັງລວມປັດໄຈຄວາມສ່ຽງຫຼັກຂອງ ທຄຕລ ຢ່າງໃກ້ຊິດເປັນປະຈຳ.
- ເພື່ອປະຕິບັດໃຫ້ສອດຄ່ອງຕາມໂຄງສ້າງການບໍລິຫານຄວາມສ່ຽງ ທຄຕລ, ຈຶ່ງຈະສ້າງຄວາມເຂົ້າໃຈລະອຽດນັບແຕ່ຜູ້ບໍລິຫານລະດັບສູງລົງຮອດພະນັກງານ, ເພື່ອຮັບປະກັນປະສິດທິຜົນໃນການຈັດຕັ້ງປະຕິບັດການບໍລິຫານຄວາມສ່ຽງ.

➢ **ຄະນະກຳມະການກວດສອບບັນຊີພາຍໃນ**

- ເຊັນຮັບຮອງເອກະສານລາຍງານທົບທວນການເງິນປະຈຳ 06 ເດືອນຕົ້ນປີ 2018 ຂອງ ທຄຕລ ຕາມມາດຕະຖານລາວ (LAS). ສຳລັບມາດຕະຖານສາກົນ (IFRS) ແມ່ນຍັງບໍ່ທັນເຊັນຮັບຮອງ ເນື່ອງຈາກວ່າຍັງມີບາງບັນຫາທີ່ຕ້ອງໄດ້ປຶກສາຫາລືກັບຜູ້ກວດສອບ ແລະ ຜູ້ຄຸ້ມຄອງ ກ່ຽວກັບການນຳໃຊ້ມາດຕະຖານລາຍງານການເງິນສາກົນສະບັບປັບປຸງໃໝ່.
- ສຳເລັດການຕິດຕາມການແຈ້ງຊັບສິນ ແລະ ລາຍຮັບຮອບວຽນທີ 2 ປະຈຳປີ 2017 ຂອງພະນັກງານ ທຄຕລ ທົ່ວລະບົບ.
- ຕິດຕາມການແກ້ໄຂຂໍ້ພົບເຫັນຈາກພະແນກກວດກາພາຍໃນ ເຫັນວ່າບັນດາພະແນກ/ສູນ ແມ່ນສາມາດແກ້ໄຂໄດ້ເປັນສ່ວນຫຼາຍ, ຍັງເຫຼືອບາງບັນຫາຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂເຊິ່ງ ທຄຕລ ມີມາດຕະການໄລຍະຍາວໃນການແກ້ໄຂ ໂດຍຈະມີການພັດທະນາລະບົບໃຫ້ເປັນເຄື່ອງມືຊ່ວຍໃນການກຳນົດຂັ້ນຕອນປະຕິບັດທຸລະກຳຕ່າງໆ. ສຳລັບມາດຕະການໄລຍະສັ້ນ ແມ່ນເນັ້ນໃສ່ກວດກາການເຮັດວຽກຂອງພະນັກງານເພີ່ມຂຶ້ນຕໍ່ການປະຕິບັດວຽກງານຂອງຕົນ.
- ສືບຕໍ່ຕິດຕາມການການແກ້ໄຂຂໍ້ພົບເຫັນຂອງອົງການກວດສອບແຫ່ງລັດ ເຫັນວ່າສ່ວນຫຼາຍແມ່ນສາມາດແກ້ໄຂສຳເລັດແລ້ວ ຂອງ ປີ 2016 ແລະ ສະໜອງຂໍ້ມູນເອກະສານຕ່າງໆໃຫ້ກວດສອບແຫ່ງລັດ ທີ່ລົງກວດສອບຖານະການເງິນ ທຄຕລ ປະຈຳປີ 2017.
- ສຳເລັດການຄັດເລືອກ ແລະ ຮັບຮອງເອົາ ບໍລິສັດກວດສອບພາຍນອກ ເພື່ອກວດສອບຖານະການເງິນຂອງ ທຄຕລ ປະຈຳປີ 2019.

➢ **ຄະນະກຳມະການຄັດເລືອກ**

- ໄດ້ພິຈາລະນາການປັບປຸງຄະນະກຳມະການສະພາບໍລິຫານ ຕາມຄຳເຫັນຂອງ ສຄຄຊ, ທຄຕລ ໄດ້ຄົ້ນຄວ້າປັບປຸງແຕ່ລະຄະນະກຳມະການປະກອບດວ້ຍ 3 ທ່ານ ທີ່ທີ່ຢູ່ໃນສະພາບໍລິຫານ, ສຳລັບຄະນະອຳນວຍການ, ພະແນກການ ແມ່ນໄດ້ແຍກອອກໃຫ້ເປັນຜູ້ສັງເກດການຂອງຄະນະກຳມະການ, ຜູ້ສັງເກດການແມ່ນສາມາດມີຄຳເຫັນໃນກອງປະຊຸມ ແຕ່ບໍ່ມີສິດໃນການລົງຄະແນນສຽງຕັດສິນບັນຫາ.
- ໄດ້ຮັບຮອງລະບຽບວ່າດ້ວຍຕຳແໜ່ງງານ: ລະບຽບລວມມີ 19 ມາດຕາ, ເຊິ່ງໃນລະບຽບໄດ້ກຳນົດມາດຖານເງື່ອນໄຂຂອງບັນດາຕຳແໜ່ງງານ, ຂັ້ນຕອນການແຕ່ງຕັ້ງ ຊັບຊ້ອນພະນັກງານ, ວາລະຂອງແຕ່ລະຕຳແໜ່ງງານ.
- ໄດ້ພິຈາລະນາການແຕ່ງຕັ້ງພະນັກງານ ຂັ້ນພະແນກ ແລະ ສາຂາ ຈຳນວນ 4 ທ່ານ.
- ປັບປຸງຄະນະກຳມະການຂອງສະພາບໍລິຫານ ລະບຽບວ່າດ້ວຍຕຳແໜ່ງງານ ແລະ ການແຕ່ງຕັ້ງພະນັກງານ 4 ຕຳແໜ່ງດັ່ງກ່າວແມ່ນຈະໄດ້ນຳສະເໜີ ເພື່ອໃຫ້ສະພາບໍລິຫານຮັບຮອງ.

➢ **ຄະນະກຳມະການຄົ້ນຄວ້າກຳນົດຄ່າຕອບແທນ**

- ພິຈາລະນາຮັບຮອງໂດຍພື້ນຖານເອົາລະບຽບການຄຸ້ມຄອງຄັງແຮຜົນຕອບແທນພະນັກງານເວລາອອກການ, ລວມມີແຫຼ່ງທີ່ມາຂອງຄັງແຮ, ການຄຸ້ມຄອງຄັງແຮ ແລະ ການນຳໃຊ້ຄັງແຮ.
- ໄດ້ຮັບຮອງເອົາສູດຄິດໄລ່ເງິນບຳເນັດພະນັກງານເວລາອອກການ.
- ພິຈາລະນາລະບຽບວ່າດ້ວຍນະໂຍບາຍເຄື່ອງນຸ່ງຫົ່ມ ແລະ ການແຕ່ງກາຍຂອງພະນັກງານ ທຄຕລ.
- ໄດ້ພິຈາລະນາຮັບຮອງໂດຍພື້ນຖານຕໍ່ກັບນະໂຍບາຍເງິນຕຳແໜ່ງງານວິຊາການຊຳນານງານ ແລະ ພະນັກງານວິຊາການປະສົບການ, ການກຳນົດເງື່ອນໄຂສະເພາະຂອງພະນັກງານຊຳນານງານ ແລະ ວິຊາການປະສົບການ.

## 7. ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳ 09 ເດືອນ ປີ 2018

ໃນ 09 ເດືອນ ປີ 2018 ຜ່ານມາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດຈັດຕັ້ງປະຕິບັດແຜນທຸລະກິດໄດ້ ດັ່ງນີ້:

- **ຍອດຊັບສິນ:** ປະຕິບັດໄດ້ 39.092.173 ລ້ານກີບ, ເທົ່າກັບ 99,91% ຂອງແຜນການປີ.
- **ຍອດເງິນຝາກ**: ປະຕິບັດໄດ້ 32.503.324 ລ້ານກີບ, ເທົ່າກັບ 98,49% ຂອງແຜນການປີ.
- **ຍອດສິນເຊື່ອທັງໝົດ**: ປະຕິບັດໄດ້ 23.650.333 ລ້ານກີບ, ເທົ່າກັບ 96,53% ຂອງແຜນການປີ.
- **ກຳໄລ/ຂາດທຶນ**: ທຄຕລ ມີກຳໄລກ່ອນອາກອນ 370.269 ລ້ານກີບ, ເທົ່າກັບ 92,56% ຂອງແຜນການປີ.

**ຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ

ໝາຍເຫດ: ສຳລັບຕົວເລກຜົນການດຳເນີນທຸລະກິດ 09 ເດືອນປີ 2018
ແມ່ນອີງຕາມເອກະສານລາຍງານການເງິນ ລວມກິດຈະການມາດຖານສາກົນ (ກ່ອນການກວດສອບ)